ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ເລກທີ 1204 /ອຄ.ກອຫ
ນະຄອນຫຼວງວຽງຈັນ, ວັນທີ 24 DEC 2020

# ຂໍ້ຕົກລົງ
# ວ່າດ້ວຍ ການຂຶ້ນທະບຽນບັນຊີເຄມີ, ການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເຄມີ ສະບັບເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016;
- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ໜັງສືສະເໜີຂອງກົມອຸດສາຫະກໍາ ແລະ ຫັດຖະກໍາ ສະບັບເລກທີ 1750/ກອຫ.ສຄ, ລົງວັນທີ 15 ທັນວາ 2020.

**ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຂຶ້ນທະບຽນບັນຊີເຄມີ, ການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ ເພື່ອເຮັດໃຫ້ການດໍາເນີນທຸລະກິດມີຄວາມສະດວກ, ວ່ອງໄວ ແລະ ການນໍາໃຊ້ເຄມີຖືກຕ້ອງຕາມຫຼັກວິຊາການ, ກົດໝາຍ ແລະ ລະບຽບການ ແນໃສ່ຮັບປະກັນຄວາມປອດໄພຕໍ່ສຸຂະພາບ, ຊີວິດ, ຊັບສິນ ແລະ ສິ່ງແວດລ້ອມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການຂຶ້ນທະບຽນບັນຊີເຄມີ, ການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ**

ການຂຶ້ນທະບຽນບັນຊີເຄມີ ແມ່ນ ການຮັບຮອງເອົາປະເພດເຄມີ ເພື່ອມາຜະລິດ, ບັນຈຸ, ຫຸ້ມຫໍ່, ຊື້ຂາຍ, ປ້ອງກັນ, ຄົ້ນຄວ້າ, ທົດລອງ, ສະໜອງ, ຂົນສົ່ງ, ນໍາເຂົ້າ, ສົ່ງອອກ, ເກັບຮັກສາ, ຄອບຄອງ, ກໍາຈັດ ແລະ ບໍາບັດ.

ການນໍາເຂົ້າ ແລະ ສົ່ງອອກເຄມີ ແມ່ນ ການນໍາເອົາເຄມີເຂົ້າມາ ສປປ ລາວ ແລະ ສົ່ງອອກເຄມີຈາກ ສປປ ລາວ ລວມທັງການນໍາເຂົ້າ ແລະ ສົ່ງອອກຊົ່ວຄາວ ໂດຍຜ່ານດ່ານສາກົນ.

ການສົ່ງຜ່ານເຄມີ ແມ່ນ ການຂົນສົ່ງເຄມີຜ່ານດິນແດນຂອງ ສປປ ລາວ ຜ່ານດ່ານສາກົນ ໂດຍບໍ່ມີການປ່ຽນຖ່າຍພາຊະນະບັນຈຸ ຫຼື ພາຫະນະຂົນສົ່ງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການປະເມີນຄວາມສ່ຽງເຄມີ** ໝາຍເຖິງ ຂະບວນການສຶກສາຄວາມເປັນໄປໄດ້ຂອງເຄມີ ທີ່ຈະເກີດອັນຕະລາຍຕໍ່ສຸຂະພາບ, ຊີວິດ, ຊັບສິນ ແລະ ສິ່ງແວດລ້ອມ;

2. **ແຜນປ້ອງກັນ ແລະ ແກ້ໄຂອຸບປະຕິເຫດຈາກເຄມີ** ໝາຍເຖິງ ການກຳນົດມາດຕະການປ້ອງກັນການເກີດອຸບປະຕິເຫດຈາກເຄມີ ແລະ ວິທີການແກ້ໄຂເມື່ອມີອຸບປະຕິເຫດເກີດຂຶ້ນ;

3. **ໃບຢັ້ງຢືນຜົນການວິເຄາະເຄມີຈາກຜູ້ຜະລິດ** ໝາຍເຖິງ ໃບຢັ້ງຢືນຜົນການວິໄຈອົງປະກອບທາງເຄມີຂອງທາດປະສົມ ຫຼື ທາດລົມປົນ;

4. **ເອກະສານຂໍ້ມູນຄວາມປອດໄພເຄມີຂອງຜູ້ຜະລິດ** ໝາຍເຖິງ ບົດແນະນຳຂອງຜູ້ຜະລິດເຄມີ ເພື່ອສະແດງໃຫ້ຮູ້ ກ່ຽວກັບ ແຫຼ່ງທີ່ມາຂອງເຄມີ, ຄຸນລັກສະນະຄວາມເປັນອັນຕະລາຍ, ມາດຕະການປ້ອງກັນ ແລະ ແກ້ໄຂ;

5. **ລະບົບເອເລັກໂຕຣນິກ** ໝາຍເຖິງ ຂະບວນການຍື່ນເອກະສານຜ່ານທາງອິນເຕີເນັດ;

6. **ເຕັກນິກ** ໝາຍເຖິງ ວິທີການ, ມາດຕະການ ຄຸ້ມຄອງຄວາມປອດໄພທາງເຄມີ ເປັນຕົ້ນ ຖັງບັນຈຸ, ການຕິດສະຫຼາກ, ການຈຳແນກປະເພດ, ການຫຸ້ມຫໍ່, ການບັນຈຸ, ການຕອບໂຕ້ພາວະສຸກເສີນ ແລະ ການປ້ອງກັນສຸຂະພາບ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດກ່ຽວກັບເຄມີໃນ ສປປ ລາວ, ຍົກເວັ້ນການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີອັນຕະລາຍ ປະເພດ ໜຶ່ງ.

## ໝວດທີ 2
## ການຂຶ້ນທະບຽນບັນຊີເຄມີ

**ມາດຕາ 5 ການສະເໜີຂຶ້ນທະບຽນບັນຊີເຄມີ**

ການສະເໜີຂຶ້ນທະບຽນບັນຊີເຄມີ ຕ້ອງເປັນນິຕິບຸກຄົນທີ່ໄດ້ຂຶ້ນທະບຽນວິສາຫະກິດ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດເຄມີ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ຜູ້ທີ່ມີຈຸດປະສົງຂໍຂຶ້ນທະບຽນບັນຊີເຄມີ ຕ້ອງປະກອບເອກະສານຍື່ນຕໍ່ ກົມອຸດສາຫະກຳ ແລະ ຫັດຖະກຳ ໂດຍກົງ ຫຼື ຜ່ານລະບົບເອເລັກໂຕຣນິກ ໂດຍມີເອກະສານປະກອບ ດັ່ງນີ້:

1. ໜັງສືສະເໜີຂຶ້ນທະບຽນບັນຊີເຄມີ ຕາມແບບພິມ ທີ່ກົມອຸດສາຫະກຳ ແລະ ຫັດຖະກຳ ໄດ້ກຳນົດ;

2. ບົດປະເມີນຄວາມສ່ຽງເຄມີ ຕາມແບບພິມ ທີ່ກົມອຸດສາຫະກຳ ແລະ ຫັດຖະກຳ ໄດ້ກຳນົດ;

3. ເອກະສານຂໍ້ມູນຄວາມປອດໄພເຄມີຂອງຜູ້ຜະລິດ ເປັນພາສາລາວ ຫຼື ພາສາອັງກິດ;

4. ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ ຫຼື ໃບອະນຸຍາດລົງທຶນຕາມກິດຈະການການລົງທຶນ;

5. ໃບຢັ້ງຢືນຜົນການວິເຄາະເຄມີຈາກຜູ້ຜະລິດ ຫຼື ຫ້ອງວິໄຈທີ່ໄດ້ຮັບອະນຸຍາດຖືກຕ້ອງ ເປັນພາສາລາວ ຫຼື ພາສາອັງກິດ ໃນກໍລະນີເປັນທາດປະສົມ.

**ມາດຕາ 6 ການພິຈາລະນາຂຶ້ນທະບຽນບັນຊີເຄມີ**

ພາຍຫຼັງໄດ້ຮັບເອກະສານຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້, ກົມອຸດສາຫະກຳ ແລະ ຫັດຖະກຳ ຕ້ອງອອກໃບທະບຽນບັນຊີເຄມີ ພາຍໃນ ສິບຫ້າ ວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີເອກະສານ ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ, ກົມອຸດສາຫະກຳ ແລະ ຫັດຖະກຳ ຕ້ອງແຈ້ງໃຫ້ຜູ້ສະເໜີຊາບຢ່າງເປັນລາຍລັກອັກສອນ ພາຍໃນ ຫ້າ ວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເພື່ອໃຫ້ຜູ້ສະເໜີແກ້ໄຂໃຫ້ຄົບຖ້ວນ ແລະ ຖືກຕ້ອງ.

ໃນກໍລະນີທີ່ບໍ່ສາມາດອອກໃບທະບຽນບັນຊີເຄມີ, ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ສະເໜີຊາບ ພາຍໃນ ຫ້າ ວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ຖືກຕ້ອງ ແລະ ຄົບຖ້ວນ.

## ໝວດທີ 3
## ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ

**ມາດຕາ 7 ຫຼັກການ ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ**

ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ ແມ່ນຕ້ອງປະຕິບັດຕາມທີ່ໄດ້ກຳນົດໃນມາດຕາ 22 ແລະ 45 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເຄມີ ດັ່ງນີ້:

**ກ. ການນຳເຂົ້າ ແລະ ສົ່ງອອກ ເຄມີ**

1. ເຄມີອັນຕະລາຍ ປະເພດ ໜຶ່ງ ແມ່ນຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ແລະ ສອດຄ່ອງກັບຫຼັກການສາກົນ. ລາຍລະອຽດ ກຳນົດໄວ້ໃນລະບຽບການສະເພາະ;

2. ເຄມີອັນຕະລາຍ ປະເພດ ສອງ ແລະ ສາມ ແມ່ນຕ້ອງໄດ້ຮັບອະນຸຍາດຈາກ ກົມອຸດສາຫະກຳ ແລະ ຫັດຖະກຳ ໂດຍໄດ້ຮັບການຢັ້ງຢືນຈາກຂະແໜງການທີ່ຄຸ້ມຄອງເຄມີດັ່ງກ່າວ;

3. ເຄມີອັນຕະລາຍ ປະເພດ ສີ່ ແລະ ເຄມີທີ່ບໍ່ນອນໃນປະເພດໃດ ແມ່ນບໍ່ຕ້ອງຂໍອະນຸຍາດ ແຕ່ກ່ອນຈະນຳເຂົ້າ ຫຼື ສົ່ງອອກ ຕ້ອງແຈ້ງໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ບ່ອນນຳເຂົ້າ ຫຼື ສົ່ງອອກ ຊາບ.

**ຂ. ການສົ່ງຜ່ານເຄມີ**

1. ເຄມີອັນຕະລາຍ ປະເພດ ໜຶ່ງ ແມ່ນຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ແລະ ສອດຄ່ອງກັບຫຼັກການສາກົນ. ລາຍລະອຽດ ກຳນົດໄວ້ໃນລະບຽບການສະເພາະ;

2. ເຄມີອັນຕະລາຍ ປະເພດ ສອງ, ສາມ, ສີ່ ແລະ ເຄມີທີ່ບໍ່ນອນໃນປະເພດໃດ ແມ່ນຕ້ອງໄດ້ຮັບອະນຸຍາດສົ່ງຜ່ານຈາກ ກົມອຸດສາຫະກຳ ແລະ ຫັດຖະກຳ.

**ມາດຕາ 8 ການນຳເຂົ້າ ແລະ ສົ່ງອອກ ເຄມີອັນຕະລາຍ ປະເພດ ສອງ ແລະ ສາມ**

ການນຳເຂົ້າ ແລະ ສົ່ງອອກ ເຄມີອັນຕະລາຍ ປະເພດ ສອງ ແລະ ສາມ ຕ້ອງມີເງື່ອນໄຂ ແລະ ປະຕິບັດຕາມມາດຕະການ ດັ່ງນີ້:

1. ເປັນນິຕິບຸກຄົນທີ່ໄດ້ຂຶ້ນທະບຽນວິສາຫະກິດ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດເຄມີ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

2. ຮັບປະກັນທາງດ້ານເຕັກນິກ, ພາຊະນະບັນຈຸ ແລະ ວັດຖຸອຸປະກອນໃຫ້ພຽງພໍ;

3. ນຳໃຊ້ພາຫະນະຂົນສົ່ງທີ່ໄດ້ມາດຕະຖານ;

4. ນຳເຂົ້າ ແລະ ສົ່ງອອກ ຜ່ານດ່ານສາກົນ.

**ມາດຕາ 9 ການສະເໜີຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກເຄມີອັນຕະລາຍ ປະເພດ ສອງ ແລະ ສາມ**

ການນຳເຂົ້າ ແລະ ສົ່ງອອກເຄມີອັນຕະລາຍ ປະເພດ ສອງ ແລະ ສາມ ໃຫ້ປະກອບເອກະສານ ຍື່ນຕໍ່ກົມອຸດສາຫະກຳ ແລະ ຫັດຖະກຳ ເພື່ອຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກ ໂດຍມີເອກະສານ ດັ່ງນີ້:

1. ໜັງສືສະເໜີຂໍອະນຸຍາດ ນຳເຂົ້າ ຫຼື ສົ່ງອອກ ເຄມີອັນຕະລາຍ ປະເພດ ສອງ ແລະ ສາມ ຕາມແບບພິມ ທີ່ກົມອຸດສາຫະກຳ ແລະ ຫັດຖະກຳ ໄດ້ກຳນົດ;

2. ສຳເນົາ ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ ແລະ ໃບອະນຸຍາດລົງທຶນ;

3. ສຳເນົາໃບທະບຽນບັນຊີເຄມີ;

4. ໃບແຈ້ງລາຄາ ແລະ ໃບສັ່ງຊື້ສິນຄ້າ;

5. ສຳເນົາ ແຜນຄວາມຕ້ອງການປະຈຳປີ ສຳລັບການນຳເຂົ້າ, ແຜນຜະລິດ ແລະ ຈຳໜ່າຍປະຈຳປີ ສຳລັບການສົ່ງອອກ;

6. ສັນຍາຊື້ຂາຍ ລະຫວ່າງ ຜູ້ນຳເຂົ້າ ແລະ ຜູ້ນຳໃຊ້ພາຍໃນ ໃນກໍລະນີນຳເຂົ້າເພື່ອສະໜອງໂດຍກົງໃຫ້ກັບຜູ້ອື່ນ;

7. ໃບອະນຸຍາດນຳເຂົ້າຈາກປະເທດປາຍທາງ ໃນກໍລະນີສົ່ງອອກເຄມີອັນຕະລາຍປະເພດ ສອງ ແລະ ສາມ ຈາກ ສປປ ລາວ ໄປປະເທດອື່ນ.

**ມາດຕາ 10 ການພິຈາລະນາອອກໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ເຄມີອັນຕະລາຍ ປະເພດ ສອງ ແລະ ສາມ**

ພາຍຫຼັງໄດ້ຮັບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້, ກົມອຸດສາຫະກຳ ແລະ ຫັດຖະກຳ ຕ້ອງອອກໃບອະນຸຍາດນຳເຂົ້າ ຫຼື ສົ່ງອອກ ພາຍໃນ ຫ້າ ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານ ຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີເອກະສານ ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ, ຕ້ອງແຈ້ງຕອບເປັນລາຍລັກອັກສອນໃຫ້ຜູ້ສະເໜີຊາບ ພາຍໃນ ສາມ ວັນ ລັດຖະການ ເພື່ອປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີທີ່ບໍ່ສາມາດອອກໃບອະນຸຍາດນຳເຂົ້າ ຫຼື ສົ່ງອອກ, ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ສະເໜີຊາບ ພາຍໃນ ຫ້າ ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ.

**ມາດຕາ 11 ການແຈ້ງການນຳເຂົ້າ ແລະ ສົ່ງອອກ ເຄມີອັນຕະລາຍ ປະເພດ ສີ່ ແລະ ເຄມີທີ່ບໍ່ນອນໃນປະເພດໃດ**

ການນຳເຂົ້າ ແລະ ສົ່ງອອກ ເຄມີອັນຕະລາຍ ປະເພດ ສີ່ ແລະ ເຄມີທີ່ບໍ່ນອນໃນປະເພດໃດ ແມ່ນ ໃຫ້ແຈ້ງຕໍ່ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ບ່ອນນຳເຂົ້າ ຫຼື ສົ່ງອອກ ຮັບຊາບ ກ່ອນວັນຈະມີການ ນຳເຂົ້າ ຫຼື ສົ່ງອອກ ຫ້າ ວັນ ລັດຖະການ.

ເອກະສານປະກອບໃນການແຈ້ງ ການນຳເຂົ້າ ຫຼື ສົ່ງອອກ ປະກອບມີ ດັ່ງນີ້:

1. ບົດລາຍງານ ກ່ຽວກັບ ເຄມີທີ່ຈະນຳເຂົ້າ ຫຼື ສົ່ງອອກ;
2. ສຳເນົາ ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ ແລະ ໃບອະນຸຍາດລົງທຶນ;
3. ສຳເນົາໃບທະບຽນບັນຊີເຄມີ;
4. ໃບແຈ້ງລາຄາ ຫຼື ໃບສັ່ງຊື້ສິນຄ້າ;
5. ສຳເນົາແຜນຄວາມຕ້ອງການປະຈຳປີ ກໍລະນີນຳເຂົ້າ;
6. ສຳເນົາແຜນການຜະລິດ ແລະ ຈຳໜ່າຍປະຈຳປີ ກໍລະນີສົ່ງອອກ;
7. ສັນຍາຊື້ຂາຍ ລະຫວ່າງ ຜູ້ນຳເຂົ້າ ແລະ ຜູ້ນຳໃຊ້ພາຍໃນ ໃນກໍລະນີນຳເຂົ້າເພື່ອສະໜອງໂດຍກົງໃຫ້ກັບຜູ້ອື່ນ.

**ມາດຕາ 12 ການສົ່ງຜ່ານເຄມີອັນຕະລາຍ ປະເພດ ສອງ, ສາມ, ສີ່ ແລະ ເຄມີທີ່ບໍ່ນອນໃນປະເພດໃດ**

ການສົ່ງຜ່ານເຄມີອັນຕະລາຍ ປະເພດ ສອງ, ສາມ, ສີ່ ແລະ ເຄມີທີ່ບໍ່ນອນໃນປະເພດໃດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນທີ່ຈົດທະບຽນຖືກຕ້ອງຢູ່ພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ຮັບເງື່ອນໄຂໃນການຂົນສົ່ງ;
2. ຮັບປະກັນທາງດ້ານເຕັກນິກ, ພາຊະນະບັນຈຸ ແລະ ວັດຖຸອຸປະກອນໃຫ້ພຽງພໍ;
3. ມີແຜນຄຸ້ມຄອງຄວາມປອດໄພ ແລະ ແກ້ໄຂອຸບປະຕິເຫດໃນການຂົນສົ່ງເຄມີຜ່ານ ສປປ ລາວ;
4. ມີປະກັນໄພອຸບປະຕິເຫດ;
5. ໄດ້ຮັບອະນຸຍາດສົ່ງອອກຈາກປະເທດຕົ້ນທາງ ແລະ ໄດ້ຮັບອະນຸຍາດນຳເຂົ້າຈາກປະເທດປາຍທາງ;
6. ຕ້ອງໄດ້ຮັບການເຫັນດີຈາກ ກົມອຸດສາຫະກຳ ແລະ ຫັດຖະກຳ;
7. ນຳໃຊ້ພາຫະນະຂົນສົ່ງທີ່ໄດ້ມາດຕະຖານ;
8. ນຳເຂົ້າ ແລະ ສົ່ງອອກຜ່ານດ່ານສາກົນ.

**ມາດຕາ 13 ການຂໍອະນຸຍາດສົ່ງຜ່ານເຄມີອັນຕະລາຍ ປະເພດ ສອງ, ສາມ, ສີ່ ແລະ ເຄມີທີ່ບໍ່ນອນໃນປະເພດໃດ**

ການສົ່ງຜ່ານເຄມີອັນຕະລາຍ ປະເພດ ສອງ, ສາມ, ສີ່ ແລະ ເຄມີທີ່ບໍ່ນອນໃນປະເພດໃດ ແມ່ນໃຫ້ປະກອບເອກະສານຍື່ນຕໍ່ ກົມອຸດສາຫະກຳ ແລະ ຫັດຖະກຳ ເພື່ອຂໍອະນຸຍາດສົ່ງຜ່ານ ໂດຍປະກອບມີເອກະສານ ດັ່ງນີ້ :

1. ໜັງສືສະເໜີຂໍອະນຸຍາດສົ່ງຜ່ານເຄມີ ຕາມແບບພິມທີ່ ກົມອຸດສາຫະກຳ ແລະ ຫັດຖະກຳ ໄດ້ກຳນົດ;
2. ສຳເນົາໃບອະນຸຍາດສົ່ງອອກເຄມີຈາກປະເທດຕົ້ນທາງ;

3. ສຳເນົາໃບອະນຸຍາດນຳເຂົ້າເຄມີຈາກປະເທດປາຍທາງ;

4. ແຜນຄຸ້ມຄອງຄວາມປອດໄພ ແລະ ແກ້ໄຂອຸບປະຕິເຫດໃນການຂົນສົ່ງເຄມີຜ່ານ ສປປ ລາວ;

5. ເອກະສານຂໍ້ມູນຄວາມປອດໄພເຄມີຂອງຜູ້ຜະລິດ ເປັນພາສາລາວ ຫຼື ພາສາອັງກິດ;

6. ສຳເນົາໃບອະນຸຍາດຂົນສົ່ງ;

7. ສຳເນົາປະກັນໄພການຂົນສົ່ງເຄມີ.

**ມາດຕາ 14 ການພິຈາລະນາອອກໃບອະນຸຍາດສົ່ງຜ່ານເຄມີອັນຕະລາຍ ປະເພດ ສອງ, ສາມ, ສີ່ ແລະ ເຄມີທີ່ບໍ່ນອນໃນປະເພດໃດ**

ພາຍຫຼັງໄດ້ຮັບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້, ກົມອຸດສາຫະກຳ ແລະ ຫັດຖະກຳ ຕ້ອງພິຈາລະນາອອກໃບອະນຸຍາດສົ່ງຜ່ານ ພາຍໃນ ສິບຫ້າ ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີເອກະສານ ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ, ຕ້ອງແຈ້ງຕອບເປັນລາຍລັກອັກສອນໃຫ້ຜູ້ສະເໜີ ຊາບ ພາຍໃນ ຫ້າ ວັນ ລັດຖະການ ເພື່ອປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີທີ່ບໍ່ສາມາດອອກໃບອະນຸຍາດສົ່ງຜ່ານເຄມີ, ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ສະເໜີ ຊາບ ພາຍໃນ ຫ້າ ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານ ຖືກຕ້ອງ ແລະ ຄົບຖ້ວນ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 15 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຂັດຂວາງການເຄື່ອນໄຫວຂອງເຈົ້າໜ້າທີ່ກ່ຽວກັບວຽກງານຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ;

2. ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານ ທີ່ຮັບຜິດຊອບກ່ຽວກັບເຄມີທີ່ກ່ຽວຂ້ອງ ເພື່ອຜົນປະໂຫຍດຂອງຕົນ;

3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 16 ຂໍ້ຫ້າມສຳລັບຜູ້ສະເໜີຂຶ້ນທະບຽນບັນຊີເຄມີ, ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ**

ຫ້າມຜູ້ສະເໜີຂຶ້ນທະບຽນບັນຊີເຄມີ, ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ ມີພຶດຕິກຳ ດັ່ງນີ້:

1. ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ ໂດຍບໍ່ສອດຄ່ອງກັບການອະນຸຍາດ;

2. ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ຜະລິດຕະພັນເຄມີປອມ, ເຄມີບໍ່ໄດ້ມາດຕະຖານ, ເຄມີເສຍຄຸນລັກສະນະ ແລະ ເຄມີບໍ່ໄດ້ຂຶ້ນທະບຽນ;

3. ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ ທີ່ບໍ່ບອກຊື່ ຫຼື ບອກຊື່ບໍ່ຊັດເຈນ;

4. ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ ຜ່ານດ່ານທີ່ບໍ່ແມ່ນດ່ານສາກົນ;

5. ປອມແປງເອກະສານ;

6. ໃຫ້ຂໍ້ມູນ ກ່ຽວກັບ ການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ ທີ່ບໍ່ຖືກກັບຄວາມເປັນຈິງ;

7. ໃຫ້ສິນບົນ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 17 ຂໍ້ຫ້າມສຳລັບ ພະນັກງານ ແລະ ເຈົ້າໜ້າທີ່**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ສົມຮູ້ຮ່ວມຄິດ ຫຼື ມີວິທີການອື່ນ ເພື່ອຫາຜົນປະໂຫຍດສ່ວນຕົວ;

2. ຮັບ ຫຼື ທວງເອົາສິນບົນ;

3. ເມີນເສີຍຕໍ່ການປະຕິບັດໜ້າທີ່, ກົດໜ່ວງ, ຖ່ວງດຶງການພິຈາລະນາເອກະສານ;

4. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ, ເປີດເຜີຍຄວາມລັບຂອງລັດ, ຄວາມລັບທາງລັດຖະການ ຫຼື ທຳລາຍເອກະສານ;

5. ກົດໜ່ວງ, ຖ່ວງດຶງ ເອກະສານ ຫຼື ປອມແປງລາຍເຊັນຜູ້ມີອຳນາດ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ການຈັດຕັ້ງປະຕິບັດວຽກງານການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ

**ມາດຕາ 18 ການຈັດຕັ້ງປະຕິບັດວຽກງານການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ**

ການຈັດຕັ້ງປະຕິບັດວຽກງານການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ປະກອບມີ ສາມຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມອຸດສາຫະກຳ ແລະ ຫັດຖະກຳ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

**ມາດຕາ 19 ສິດ ແລະ ໜ້າທີ່ຂອງກົມອຸດສາຫະກຳ ແລະ ຫັດຖະກຳ**

ໃນການຄຸ້ມຄອງວຽກງານການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ, ກົມອຸດສາຫະກຳ ແລະ ຫັດຖະກຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງ ນິຕິກຳ, ແຜນການເຄື່ອນໄຫວ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບ ການຂຶ້ນທະບຽນບັນຊີເຄມີ, ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ;

3. ໃຫ້ຄຳແນະນຳ ກ່ຽວກັບ ການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ເຄມີອັນຕະລາຍ ປະເພດ ສອງ, ສາມ, ສີ່ ແລະ ເຄມີທີ່ບໍ່ນອນໃນປະເພດໃດ;

4. ຮັບຄຳຮ້ອງຂໍອະນຸຍາດຂຶ້ນທະບຽນບັນຊີເຄມີ, ນຳເຂົ້າ ແລະ ສົ່ງອອກເຄມີອັນຕະລາຍ ປະເພດ ສອງ ແລະ ສາມ;

5. ຮັບຄຳຮ້ອງຂໍອະນຸຍາດ ສົ່ງຜ່ານເຄມີອັນຕະລາຍ ປະເພດ ສອງ, ສາມ, ສີ່ ແລະ ເຄມີທີ່ບໍ່ນອນໃນປະເພດໃດ;

6. ຕິດຕາມ, ກວດກາ ການດຳເນີນທຸລະກິດກ່ຽວກັບເຄມີ;

7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບ ການຂຶ້ນທະບຽນບັນຊີເຄມີ, ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ;

8. ກັກ, ອາຍັດ ເຄມີທີ່ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

9. ພິຈາລະນາອອກ ແລະ ລຶບລ້າງ ໃບທະບຽນບັນຊີເຄມີ, ໃບອະນຸຍາດນຳເຂົ້າ, ສົ່ງອອກ ເຄມີອັນຕະລາຍ ປະເພດ ສອງ ແລະ ສາມ;

10. ສະຫຼຸບລາຍງານການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ການສົ່ງຜ່ານເຄມີ ໃຫ້ລັດຖະບານ ທຸກໆ ຫົກ ເດືອນ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 20 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ;

2. ໃຫ້ຄຳແນະນຳກ່ຽວກັບການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ;

3. ຮັບຮອງແຜນນຳເຂົ້າເຄມີປະຈຳປີຂອງຜູ້ດຳເນີນທຸລະກິດກ່ຽວກັບເຄມີ ສຳລັບເຄມີຂະແໜງອຸດສາຫະກຳ ແລະ ການຄ້າ;

4. ຮັບການແຈ້ງ ການນຳເຂົ້າ ຫຼື ສົ່ງອອກເຄມີອັນຕະລາຍ ປະເພດ ສີ່ ແລະ ເຄມີທີ່ບໍ່ນອນໃນປະເພດໃດ;

5. ຕິດຕາມ, ກວດກາ ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ ໃນຂອບເຂດແຂວງ, ນະຄອນຫຼວງຂອງຕົນ;

6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບ ການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ;

7. ກັກ, ອາຍັດ ເຄມີທີ່ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

8. ສະເໜີໃຫ້ ກົມອຸດສາຫະກຳ ແລະ ຫັດຖະກຳ ພິຈາລະນາອອກໃບທະບຽນບັນຊີເຄມີ ຫຼື ລຶບລ້າງໃບອະນຸຍາດນຳເຂົ້າ, ສົ່ງອອກ ເຄມີອັນຕະລາຍ ປະເພດ ສອງ ແລະ ສາມ ແລະ ສົ່ງຜ່ານເຄມີ;

9. ສະຫຼຸບລາຍງານສະພາບການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີໃນແຂວງຂອງຕົນ ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ທຸກໆ ສາມ ເດືອນ.

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ໃນການຄຸ້ມຄອງວຽກງານການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບການຂຶ້ນທະບຽນບັນຊີເຄມີ, ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ;

2. ໃຫ້ຄຳແນະນຳກ່ຽວກັບການຂຶ້ນທະບຽນບັນຊີເຄມີ, ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ;

3. ຕິດຕາມ, ກວດກາ ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ ໃນຂອບເຂດເມືອງ, ນະຄອນ ຂອງຕົນ;

4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ;

5. ກັກ, ອາຍັດ ເຄມີທີ່ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

6. ສະຫຼຸບລາຍງານສະພາບການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີໃນເມືອງ, ນະຄອນ ຂອງຕົນ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ທຸກໆ ສາມ ເດືອນ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເຜີຍແຜ່ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ລັດຖະມົນຕີ

ນ. ເຂັມມະນີ ພົນເສນາ